ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພັກປະຊາຊົນປະຕິວັດລາວ
ຄະນະໂຄສະນາອົບຮົມສູນກາງພັກ ເລກທີ.18./ຄອສພ

ນະຄອນຫຼວງວຽງຈັນ, ວັນທີ.3../..3../ 2022

# ແຈ້ງການແນະນຳ

**ເຖິງ:** - ຄະນະພັກ ກະຊວງ - ອົງການ, ສູນກາງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ອ້ອມຂ້າງ ສູນກາງ;
- ຄະນະພັກນະຄອນຫຼວງວຽງຈັນ ແລະ ຄະນະພັກແຂວງໃນທົ່ວປະເທດ.
- ຄະນະໂຄສະນາອົບຮົມນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ໃນທົ່ວປະເທດ.

**ເລື່ອງ:** ໂຄສະນາ - ປາຖະກະຖາ ວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 67 ປີ (22/03/1955-22/03/2022).

- ອີງຕາມ ມະຕິຕົກລົງຂອງກົມການເມືອງສູນກາງພັກ ສະບັບເລກທີ 04/ກມສພ, ລົງວັນທີ 21 ມີນາ 2013 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະໂຄສະນາອົບຮົມສູນກາງພັກ.

ເພື່ອເຮັດໃຫ້ການຈັດຕັ້ງໂຄສະນາ-ປາຖະກະຖາ ວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບບ 67 ປີ (22/03/1955-22/03/2022) ໄດ້ຮັບການຈັດຕັ້ງໂຄສະນາເຜີຍແຜ່ໃຫ້ເປັນຂະບວນການຟົດຟື້ນ, ມີເນື້ອໃນຄວາມໝາຍເລິກເຊິ່ງ, ກວ້າງຂວາງ ແລະ ທົ່ວເຖິງທຸກເປົ້າໝາຍ, ຄະນະໂຄສະນາອົບຮົມສູນກາງພັກ ຈຶ່ງໄດ້ອອກແຈ້ງການແນະນຳໃນການໂຄສະນາ-ປາຖະກະຖາ ເຊິ່ງມີເນື້ອໃນດັ່ງລຸ່ມນີ້:

**I. ຈຸດປະສົງ - ລະດັບຄາດໝາຍ.**

1. ເພື່ອທົບທວນຫວນຄືນມູນເຊື້ອ ແລະ ໄຊຊະນະປະຫວັດສາດຂອງພາລະກິດແຫ່ງການຕໍ່ສູ້ປົດປ່ອຍຊາດໃນເມື່ອກ່ອນ ແລະ ຜົນສຳເລັດໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ ຕະຫຼອດໄລຍະ 67 ປີ.

2. ຖືເອົາວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ເພື່ອຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ ເຂົ້າສູ່ຊີວິດຕົວຈິງ; ພ້ອມໃນທົ່ວສັງຄົມທັງປັບປຸງກໍ່ສ້າງພັກໃນທຸກດ້ານ ດ້ວຍມາດຕະການສືບຕໍ່ດຳເນີນຊີວິດການເມືອງ ປົວແປງ ພາຍໃນພັກໃຫ້ເລິກເຊິ່ງ ເຮັດໃຫ້ພັກມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ, ເພີ່ມຄວາມສາມາດນຳພາ ແລະ ລັກສະນະນຳໜ້າຂອງພັກ ໃຫ້ສູງຂຶ້ນຢ່າງບໍ່ຢຸດຢັ້ງ. ໄປພ້ອມກັນນັ້ນເປັນເຈົ້າການຍົກສູງສະຕິລະວັງຕົວຕໍ່ກົນອຸບາຍມ້າງເພຂອງອິດທິກຳລັງປໍລະປັກ, ຕີຖອຍບັນດາປາກົດການຫຍໍ້ທໍ້ຕ່າງໆໃນສັງຄົມ, ຮັບປະກັນສະຖຽນພາບທາງດ້ານການເມືອງຢ່າງໜັກແໜ້ນ ແລະ ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍກຳຄື ຄວາມສະຫງົບສຸກຂອງປະຊາຊົນ.

3. ເພື່ອປຸກລະດົມນ້ຳໃຈຮັກຊາດ, ຮັກລະບອບໃໝ່, ເປັນເຈົ້າຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ເຊີດຊູບົດບາດການນຳພາຂອງພັກ ໄປພ້ອມກັບການປຸກລະດົມຂະບວນການແຂ່ງຂັນ "ຮັກຊາດ ແລະ ພັດທະນາ"

สแกนด้วย CamScanner

ໂດຍຕິດພັນກັບການຍູ້ແຮງຂະບວນການດ້ານຕ່າງໆ ເພື່ອຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX ໃນຕໍ່ໜ້ານີ້ ໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້.

4. ເພື່ອສືບຕໍ່ບຸກທະລຸທາງດ້ານແນວຄິດ ຈິນຕະນາການ, ສ້າງໃຫ້ມີການຫັນປ່ຽນຢ່າງແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ, ສ້າງຄວາມຮັບຮູ້ແນວຄິດ ແລະ ການກະທຳ, ສົ່ງເສີມດ້ານດີ, ແກ້ໄຂບັນດາຂໍ້ຄົງຄ້າງ ແລະ ສິ່ງທ້າທາຍຕ່າງໆທີ່ເກີດຂຶ້ນ, ສ້າງຄວາມເຊື່ອໝັ້ນຂອງພະນັກງານ ແລະ ປະຊາຊົນບັນດາເຜົ່າຕໍ່ການນຳພາຂອງພັກ, ການຄຸ້ມຄອງຂອງລັດ, ເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນທົ່ວປວງຊົນ ເຂັ້ມແຂງໜັກແໜ້ນ, ເປັນກຳລັງແຮງເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ ເພື່ອນຳເອົາປະເທດຊາດກ້າວຂຶ້ນສູ່ຄວາມວັດທະນະຖາວອນ.

5. ເພື່ອໂຄສະນາແນວທາງ, ນະໂຍບາຍຂອງພັກ-ລັດ, ຜົນສຳເລັດຂອງການປົກປັກຮັກສາ ແລະ ພັດທະນາປະເທດຊາດ ພາຍໃຕ້ການນຳພາຂອງພັກ ໃຫ້ແກ່ບັນດາປະເທດ ໃນພາກພື້ນ ແລະ ສາກົນ ຮັບຮູ້ເຂົ້າໃຈຕາມແນວທາງການຕ່າງປະເທດທີ່ພັກເຮົາໄດ້ວາງໄວ້, ບົນພື້ນຖານນັ້ນ ເພື່ອສືບຕໍ່ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ, ສ້າງສາພັດທະນາປະເທດຊາດ ໃນເງື່ອນໄຂທີ່ປະເທດເຮົາເຊື່ອມໂຍງສາກົນ ແລະ ພາກພື້ນຢ່າງຕັ້ງໜ້າ.

**II. ເນື້ອໃນໂຄສະນາ - ປາຖະກະຖາ**

1. ໃຫ້ນຳໃຊ້ເອກະສານ ໂຄສະນາ-ປາຖະກະຖາ ວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ທີ່ມີແລ້ວນັ້ນ.

2. ເນື້ອໃນໂຄສະນາ-ປາຖະກະຖາ ໃຫ້ຕິດພັນກັບຜົນງານແຫ່ງການນຳພາ-ຊີ້ນຳຂອງຄະນະພັກ ກະຊວງ-ອົງການ ແລະ ທ້ອງຖິ່ນຂອງຕົນ.

**III. ເປົ້າໝາຍເຂົ້າຮ່ວມ ແລະ ກຳນົດເວລາ**

- ເປົ້າໝາຍ: ພະນັກງານ, ສະມາຊິກພັກ, ນາຍ ແລະ ພົນທະຫານ, ນາຍ ແລະ ພົນຕຳຫຼວດ, ນັກຮຽນ-ນັກສຶກສາ ແລະ ປະຊາຊົນບັນດາເຜົ່າໃນທົ່ວສັງຄົມ ຕາມຂອບເຂດຄະນະພັກຕົນຮັບຜິດຊອບ.

- ກຳນົດເວລາ: ການຈັດຕັ້ງປາຖະກະຖາ ອາດໃຊ້ເວລາ 01 ຫຼື 02 ຕອນ ຕາມເງື່ອນໄຂຕົວຈິງຂອງກະຊວງ-ອົງການ ແລະ ທ້ອງຖິ່ນ.

**IV. ຮູບການ ແລະ ວິທີຈັດຕັ້ງປະຕິບັດ**

1. ມອບໃຫ້ ຄະນະປະຈຳພັກ ແຕ່ລະຂັ້ນ ປຶກສາຫາລື, ແຕ່ງຕັ້ງຄະນະຮັບຜິດຊອບປາຖະກະຖາ ໃນຂັ້ນຂອງຕົນ ໂດຍໃຫ້ຄະນະໂຄສະນາອົບຮົມ ເປັນໃຈກາງປະສານງານ.

2. ສຳລັບຜູ້ປາຖະກະຖາ ມອບໃຫ້ຄະນະປະຈຳພັກ ແຕ່ລະຂັ້ນ ຫຼື ອາດຈະເຊີນເອົາພະນັກງານປະຕິວັດອາວຸໂສບຳນານ ຜູ້ທີ່ມີບົດບາດ ເປັນຜູ້ປາຖະກະຖາຕາມເງື່ອນໄຂຕົວຈິງ, ພ້ອມກັນນັ້ນ ໃຫ້ອີງໃສ່ສະພາບຕົວຈິງຂອງກະຊວງ-ອົງການ ແລະ ທ້ອງຖິ່ນ ເພື່ອຈັດຕັ້ງການປາຖະກະຖາ ດ້ວຍຮູບການທີ່ເໝາະສົມ ແນໃສ່ຈຳກັດການແຜ່ລະບາດຂອງພະຍາດໂຄວິດ-19 ຕາມການແນະນຳຂອງຄະນະສະເພາະກິດ.

3. ຖືເອົາການສະເຫຼີມສະຫລອງວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 67 ປີ ເປັນການສ້າງຂະບວນການ ໃນຖັນແຖວສະມາຊິກພັກ, ຄົ້ນຄວ້າຮໍ່າຮຽນ ແນວຄິດໄກສອນ ພົມວິຫານ; ການຄົ້ນຄວ້າເຊື່ອມຊຶມບັນດາມະຕິ, ແນວທາງຂອງພັກ.

4. ສາຍສາລະຄະດີກ່ຽວກັບປະຫວັດມູນເຊື້ອຂອງຊາດ, ຂອງພັກ, ຜົນງານ ແລະ ຜົນສຳເລັດໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

5. ດຳເນີນການໂຄສະນາຜ່ານສື່ຕ່າງໆ ຢ່າງກວ້າງຂວາງ.

6. ວາງກະຕ່າດອກໄມ້ ຢູ່ອະນຸສອນສະຖານຂອງຜູ້ນຳການປະຕິວັດ.

7. ພາຍຫຼັງດຳເນີນການຈັດຕັ້ງປາຖະກະຖາສຳເລັດແລ້ວ ສະຫຼຸບລາຍງານ ໃຫ້ຄະນະໂຄສະນາອົບຮົມສູນກາງພັກຕາມເວລາອັນຄວນດ້ວຍ.

ຮອງ ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ

ລາວປາວຊົ່ງ ນະວົງໄຊ

สแกนด้วย CamScanner